ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 40 /ທຄຕລ ...ສພທ......
ນະຄອນຫຼວງວຽງຈັນ, ວັນທີ: ..23...ຕຸລາ..2023.....

**ມະຕິ**
**ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ**
**ຄັ້ງທີ 3 ປະຈຳປີ 2023, ວັນທີ 23/10/2023**

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 3 ປະຈຳປີ 2023 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:00-16:30 ໂມງ ວັນທີ 23 ຕຸລາ 2023 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນປອນ ວັນນະຈິດ ປະທານສະພາບໍລິຫານ, ມີສະມາຊິກສະພາບໍລິຫານເຂົ້າຮ່ວມ 7 ທ່ານ) ໃນນັ້ນ, ສະມາຊິກສະພາບໍລິຫານຈາກຜູ້ຖືຮຸ້ນຍຸດທະສາດ ແມ່ນຜູ້ຕາງໜ້າເຂົ້າຮ່ວມ (ມີຄະນະອຳນວຍການ ແລະ ພະແນກທີ່ກ່ຽວຂ້ອງເຂົ້າຮ່ວມເປັນຜູ້ສັງເກດການ).

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ຮັບຊາບລາຍງານຜົນການດຳເນີນທຸລະກິດ ທຄຕລ ຮອດເດືອນ 09/2023;
2. ຮັບຊາບລາຍງານລາຍງານວຽກກວດກາພາຍໃນປະຈຳໄຕມາດ;
3. ຮັບຊາບລາຍງານວຽກບັນຊີປະຈຳໄຕມາດ;
4. ຮັບຊາບລາຍງານວຽກຄຸ້ມຄອງຄວາມສ່ຽງປະຈຳໄຕມາດ;
5. ຮັບຊາບລາຍງານການພິຈາລະນາຫຼຸດຄ່າທຳນຽມອະນຸມັດສິນເຊື່ອໃຫ້ແກ່ລູກຄ້າບໍລິສັດ 1 ລາຍການ;
6. ຮັບຮອງການຂໍກູ້ຢືມເງິນລູກຄ້າບໍລິສັດ 1 ລາຍການ;
7. ຮັບຮອງໃນດ້ານຫຼັກການ ກ່ຽວກັບ ແຜນການປັບປຸງນະໂຍບາຍແລະສະຫວັດດີການສຳລັບພະນັກງານປະຈຳປີ 2024;
8. ຮັບຊາບລາຍງານກ່ຽວກັບການອອກພັກຜ່ອນລໍຖ້າຮັບບຳເນັດຂອງ ຮອງຜູ້ອຳນວຍການທີ່ເປັນສະມາຊິກສະພາບໍລິຫານ 1 ທ່ານ;
9. ຮັບຮອງເປົ້າໝາຍສະມາຊິກສະພາບໍລິຫານ ເພື່ອປ່ຽນແທນຜູ້ຄົບວາລະ;

**ປະທານສະພາບໍລິຫານ**

**ບຸນປອນ ວັນນະຈິດ**